ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------------

ສຳນັກງານນາຍົກລັດຖະມົນຕີ

ອົງການໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ ເລກທີ 993 /ສນຍ.ອປທ

ນະຄອນຫລວງວຽງຈັນ, ວັນທີ 16 JUN 2011

# ຂໍ້ຕົກລົງ
# ວ່າດ້ວຍອັດຕາຄ່າໂທລະສັບ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 375/ນຍ, ລົງວັນທີ 22 ຕຸລາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ອົງການ ໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ.

ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ,

ຫົວໜ້າ ອົງການ ໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ

ອອກຂໍ້ຕົກລົງ

## ໝວດທີ I
## ຂໍ້ບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ອັດຕາຄ່າໂທລະສັບ ໃນ ສປປ ລາວ ເພື່ອໃຫ້ບັນດາບໍລິສັດ ບໍລິການ ໂທລະຄົມມະນາຄົມ ປະຕິບັດ ຢ່າງເປັນເອກະພາບ, ສະເໝີພາບ ເພື່ອຊຸກຍູ້ສົ່ງເສີມການບໍລິການ ໂທລະຄົມມະນາຄົມ ໃຫ້ມີປະສິດທິພາບ, ປະສິດທິຜົນສູງ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາ ປະເທດຊາດ.

ມາດຕາ 2 ອັດຕາຄ່າໂທລະສັບ

2.1 ອັດຕາຄ່າໂທບໍລິການພາຍໃນເຄືອຂ່າຍ:

| ລ/ດ | ປະເພດການບໍລິການ | ຄ່າເຊົ່າປະຈຳເດືອນ | ອັດຕາຄ່າໂທ |
|---|---|---|---|
| 1 | ໂທລະສັບຕັ້ງໂຕະ | 15,000 ກີບ/ເດືອນ | 250 ກີບ/ນາທີ |
| 2 | ໂທລະສັບມືຖືແບບຕັ້ງໂຕະ | ບໍ່ມີ | 250 ກີບ/ນາທີ |
| 3 | ໂທລະສັບມືຖືລາຍເດືອນ | 25,000 ກີບ/ເດືອນ | 300 ກີບ/ນາທີ |
| 4 | ໂທລະສັບມືຖືແບບຕື່ມເງິນ | ບໍ່ມີ | 800 ກີບ/ນາທີ |
| 5 | ສົ່ງຂໍ້ຄວາມສັ້ນ | | 100 ກີບ/ຄັ້ງ |

2.2 ອັດຕາຄ່າບໍລິການໂທຂ້າມເຄືອຂ່າຍ:

| ລ/ດ | ປະເພດການບໍລິການ | ອັດຕາຄ່າໂທ | ອັດຕາຄ່າຜ່ານ LANIC[1] | ອັດຕາຄ່າເຊື່ອມຕໍ່ |
|---|---|---|---|---|
| 1 | ໂທລະສັບຕັ້ງໂຕະ | 250 ກີບ/ນາທີ | 5 ກີບ/ນາທີ | 100 ກີບ/ນາທີ |
| 2 | ໂທລະສັບມືຖືແບບຕັ້ງໂຕະ | 250 ກີບ/ນາທີ | 5 ກີບ/ນາທີ | 100 ກີບ/ນາທີ |
| 3 | ໂທລະສັບມືຖືລາຍເດືອນ | 300 ກີບ/ນາທີ | 5 ກີບ/ນາທີ | 100 ກີບ/ນາທີ |
| 4 | ໂທລະສັບມືຖືແບບຕື່ມເງິນ | 800 ກີບ/ນາທີ | 5 ກີບ/ນາທີ | 100 ກີບ/ນາທີ |
| 5 | ສົ່ງຂໍ້ຄວາມສັ້ນ | 200 ກີບ/ຄັ້ງ | 5 ກີບ/ຄັ້ງ | 50 ກີບ/ຄັ້ງ |

2.3 ອັດຕາຄ່າບໍລິການໂທອອກໄປຕ່າງປະເທດ:

<table>
<tr><th>ລ/ດ</th><th>ປະເພດການບໍລິການ</th><th>ອັດຕາຄ່າໂທ</th><th>ອັດຕາຄ່າຜ່ານ LANIC</th></tr>
<tr><td>1</td><td>ໂທລະສັບຕັ້ງໂຕະ</td><td rowspan="4">+30% ແຕ່ບໍ່ໃຫ້ຫຼຸດ 1,800 ກີບ/ນາທີ</td><td>5 ກີບ/ນາທີ</td></tr>
<tr><td>2</td><td>ໂທລະສັບມືຖືແບບຕັ້ງໂຕະ</td><td>5 ກີບ/ນາທີ</td></tr>
<tr><td>3</td><td>ໂທລະສັບມືຖືລາຍເດືອນ</td><td>5 ກີບ/ນາທີ</td></tr>
<tr><td>4</td><td>ໂທລະສັບມືຖືແບບຕື່ມເງິນ</td><td>5 ກີບ/ນາທີ</td></tr>
<tr><td>5</td><td>ສົ່ງຂໍ້ຄວາມສັ້ນ</td><td>500 ກີບ/ຄັ້ງ</td><td>5 ກີບ/ຄັ້ງ</td></tr>
</table>

2.4 ອັດຕາຄ່າໂທເຂົ້າ ແລະ ຮັບຂໍ້ຄວາມສັ້ນຈາກຕ່າງປະເທດ:

| ລ/ດ | ປະເພດບໍລິການ | ອັດຕາຄ່າໂທ | ອັດຕາຄ່າຜ່ານ LANIC | ອັດຕາຄ່າເຊື່ອມຕໍ່ (ສຳລັບບໍລິມາດ Off net) |
|---|---|---|---|---|
| 1 | ໂທລະສັບ (Voice) | 505 ກີບ/ນາທີ | 85 ກີບ/ນາທີ | 100 ກີບ/ນາທີ |
| 2 | ຮັບຂໍ້ຄວາມສັ້ນ (SMS) | 500 ກີບ/ຄັ້ງ | 5 ກີບ/ຄັ້ງ | 50 ກີບ/ຄັ້ງ |

[1] LANIC - ສູນອິນເຕີເນັດແຫ່ງຊາດ

**ມາດຕາ 3 ການສົ່ງເສີມການໃຫ້ບໍລິການ**

ຊຸກຍູ້ສົ່ງເສີມ ໃຫ້ມີບໍລິການນຳໃຊ້ ເຕັກໂນໂລຊີໃໝ່, ທັນສະໃໝ, ສະດວກ, ວ່ອງໄວ ແລະ ປອດໄພ, ຮັບປະກັນ ບໍ່ໃຫ້ກະທົບ ຕໍ່ອັດຕາຄ່າໂທລະສັບທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

## ໝວດທີ II
## ການເກັບອັດຕາຄ່າໂທລະສັບ ແລະ ຄ່າເຊື່ອມຕໍ່

**ມາດຕາ 4 ການເກັບອັດຕາຄ່າໂທລະສັບ ແລະ ຄ່າເຊື່ອມຕໍ່**

4.1 ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ການບໍລິການໂທລະສັບ ຕ້ອງຊຳລະຄ່າໂທລະສັບ ໃຫ້ບັນດາ ວິສາຫະກິດ ຫລື ບໍລິສັດທີ່ໃຫ້ບໍລິການໂທລະຄົມ ຕາມອັດຕາທີ່ລະບຸໄວ້ໃນມາດຕາ 2 ຂ້າງເທິງ ໃຫ້ຄົບຖ້ວນຕາມກຳນົດເວລາ.

4.2 ບັນດາວິສາຫະກິດ ຫຼື ບໍລິສັດ ຕ້ອງຊຳລະ ອັດຕາຄ່າເຊື່ອມຕໍ່ລະຫວ່າງຜູ້ໃຫ້ບໍລິການ ຕາມອັດຕາທີ່ລະບຸໄວ້ໃນມາດຕາ 2 ຂ້າງເທິງ ໃຫ້ຄົບຖ້ວນຕາມກຳນົດເວລາ.

## ໝວດທີ III
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 5 ຂໍ້ຫ້າມ**

ຫ້າມສະໜອງການບໍລິການ ທີ່ຂັດກັບຫຼັກການແຂ່ງຂັນ ທີ່ເປັນທຳ ເຊັ່ນ: ຫ້າມແຈກ SIM CARD ແລະ ເລກໝາຍໂທລະສັບມືຖື ໂດຍບໍ່ຄິດຄ່າ, ຫ້າມການອະນຸຍາດການໂທລ້າໆ.

**ມາດຕາ 6 ນະໂຍບາຍຕໍ່ ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ຕັ້ງໜ້າປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຕາມຄວາມເໝາະສົມ.

**ມາດຕາ 7 ມາດຕະການຕໍ່ ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ແລະ ບັນດາ ລະບຽບການຂອງລັດທີ່ກ່ຽວຂ້ອງ ຈະຖືກກ່າວເຕືອນ ແລະ ປັບໃໝ ຕາມຄວາມເໝາະສົມ.

## ໝວດທີ V
## ຂໍ້ບັນຍັດສຸດທ້າຍ

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມໂທລະຄົມມະນາຄົມ ແລະ ກົມອິນເຕີເນັດ, ອົງການໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ ຈັດຕັ້ງປະຕິບັດ, ເກັບຄ່ານຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດອິນເຕີເນັດ ແລະ ດຳເນີນການຄຸ້ມຄອງ ໃຫ້ເປັນເອກະພາບໃນຂອບເຂດ ທົ່ວປະເທດ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງ ແລະ ລະບຽບການ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ ປະຈຳ ສຳນັກງານ ນາຍົກລັດຖະມົນຕີ,**

**ຫົວໜ້າ ອປທ ແຫ່ງຊາດ**

ຄຳລວດ ສິດລາກອນ